ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ

ເລກທີ 1358 /ຫສນຍ
ນະຄອນຫຼວງວຽງຈັນ, ວັນທີ 12. 8. 2019

# ແຈ້ງການ

ຮຽນ: - ທ່ານ ຮອງນາຍົກລັດຖະມົນຕີ, ລັດຖະມົນຕີກະຊວງການເງິນ ທີ່ນັບຖື.
- ທ່ານ ລັດຖະມົນຕີກະຊວງວິທະຍາສາດ ແລະ ເຕັກໂນໂລຊີ.
- ທ່ານ ລັດຖະມົນຕີກະຊວງໂຍທາທິການ ແລະ ຂົນສົ່ງ.
- ທ່ານ ລັດຖະມົນຕີກະຊວງອຸດສາຫະກຳ ແລະ ການຄ້າ.

ເລື່ອງ: ທິດຊີ້ນຳກ່ຽວກັບການກວດກາຄຸນນະພາບເຄື່ອງໃຊ້ໄຟຟ້າ ແລະ ເອເລັກໂຕຣນິກ ທີ່ນຳເຂົ້າ, ຈຳໜ່າຍ ແລະ ຜະລິດ ຢູ່ ສປປ ລາວ.

- ອີງຕາມການລາຍງານ ຂອງລັດຖະມົນຕີກະຊວງວິທະຍາສາດ ແລະ ເຕັກໂນໂລຊີ ຕໍ່ກອງປະຊຸມນາຍົກ-ຮອງນາຍົກລັດຖະມົນຕີ ຄັ້ງວັນທີ 06-07 ສິງຫາ 2019.
- ອີງຕາມການຕົກລົງ ແລະ ຊີ້ນຳຂອງກອງປະຊຸມນາຍົກ-ຮອງນາຍົກລັດຖະມົນຕີ ຄັ້ງວັນທີ 06-07 ສິງຫາ 2019.

ຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ ຂໍຖືເປັນກຽດແຈ້ງການຕົກລົງ ແລະ ຊີ້ນຳຂອງກອງປະຊຸມນາຍົກ-ຮອງນາຍົກລັດຖະມົນຕີ ມາຍັງທ່ານ ຊາບດັ່ງນີ້: ຜ່ານມາລັດຖະບານ ໄດ້ຕົກລົງໃຫ້ກະຊວງວິທະຍາສາດ ແລະ ເຕັກໂນໂລຊີ ເຮັດທົດລອງການກວດສອບຄຸນນະພາບເຄື່ອງໃຊ້ໄຟຟ້າ ແລະ ເອເລັກໂຕຣນິກ ຕາມແຈ້ງການ ຂອງຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ ສະບັບເລກທີ 1441/ຫສນຍ.ກຄສ, ລົງວັນທີ 22 ກັນຍາ 2017 ແລະ ສະບັບເລກທີ 2022/ຫສນຍ.ກນກ, ລົງວັນທີ 13 ທັນວາ 2018, ຊຶ່ງຜ່ານການຈັດຕັ້ງປະຕິບັດທົດລອງ ຕາມແຈ້ງການດັ່ງກ່າວ ຂະແໜງການກ່ຽວຂ້ອງ ໄດ້ລາຍງານຕໍ່ກອງປະຊຸມນາຍົກ-ຮອງນາຍົກລັດຖະມົນຕີ ເຫັນວ່າການດຳເນີນການກວດສອບຄຸນນະພາບເຄື່ອງໃຊ້ໄຟຟ້າ ແລະ ເອເລັກໂຕຣນິກ ທີ່ນຳເຂົ້າ ຢູ່ສາງທ່ານາແລ້ງ ໂດຍຜ່ານດ່ານສາກົນຂົວມິດຕະພາບ I ຂອງຂະແໜງວິທະຍາສາດ ແລະ ເຕັກໂນໂລຊີ ໄດ້ມີຜົນກະທົບ ແລະ ສ້າງຄວາມຫຍຸ້ງຍາກໃຫ້ພາກທຸລະກິດ, ດັ່ງນັ້ນ ກອງປະຊຸມນາຍົກ-ຮອງນາຍົກລັດຖະມົນຕີ ໄດ້ຕົກລົງ ແລະ ຊີ້ນຳ ໃຫ້ປະຕິບັດ ດັ່ງນີ້:

1. ໃຫ້ກະຊວງວິທະຍາສາດ ແລະ ເຕັກໂນໂລຊີ ຢຸດຕິຊົ່ວຄາວ ການກວດສອບຄຸນນະພາບເຄື່ອງໃຊ້ໄຟຟ້າ ແລະ ເຄື່ອງເອເລັກໂຕຣນິກ ຢູ່ສາງທ່ານາແລ້ງ ດ່ານສາກົນຂົວມິດຕະພາບ I, ໃຫ້ກະຊວງວິທະຍາສາດ ແລະ ເຕັກໂນໂລຊີ ກວດສອບຄຸນນະພາບຂອງສິນຄ້າດັ່ງກ່າວ ຢູ່ປາຍທາງ (ຕົວແທນຈຳໜ່າຍ ແລະ ຮ້ານຄ້າຈຳໜ່າຍທົ່ວໄປ), ແຕ່ບໍ່ໃຫ້ເກັບຄ່າທຳນຽມ ແລະ ຄ່າບໍລິການ ໃນການກວດຄຸນນະພາບດັ່ງກ່າວ ນຳຜູ້ປະກອບການ, ໃຫ້ກະຊວງວິທະຍາສາດ ແລະ ເຕັກໂນໂລຊີ ສືບຕໍ່ຂຶ້ນແຜນງົບປະມານໃນການກວດສອບຄຸນນະພາບຂອງວຽກງານດັ່ງກ່າວ ຕາມຄວາມສາມາດຂອງງົບປະມານລັດ ທີ່ມີຕົວຈິງ ໃນແຕ່ລະປີ ແລະ ນຳໃຊ້ເງິນ ທີ່ໄດ້ຈາກການເກັບຄ່າປັບໃໝນຳຜູ້ປະກອບການ ທີ່ນຳເຂົ້າ ແລະ ຈຳໜ່າຍສິນຄ້າ ບໍ່ໄດ້ມາດຕະຖານ.



Scanned by CamScanner

2. ມອບໃຫ້ທ່ານ ສອນໄຊ ສີພັນດອນ, ຮອງນາຍົກລັດຖະມົນຕີ ຈັດປະຊຸມຮ່ວມກັບກະຊວງການເງິນ, ກະຊວງອຸດສາຫະກຳ ແລະ ການຄ້າ, ກະຊວງວິທະຍາສາດ ແລະ ເຕັກໂນໂລຊີ, ສະຖາບັນຄົ້ນຄວ້າເສດຖະກິດແຫ່ງຊາດ ຄະນະຊ່ວຍວຽກຄົ້ນຄວ້າໃຫ້ທ່ານ ນາຍົກລັດຖະມົນຕີ ແລະ ພາກສ່ວນກ່ຽວຂ້ອງ ມາປະຊຸມປຶກສາຫາລືກ່ຽວກັບລະບຽບການໃນການກວດ ເຊັ່ນວ່າ: ກວດສິນຄ້າໃນເວລານຳເຂົ້າກວດແນວໃດ, ກວດຢູ່ປາຍທາງກວດແນວໃດ, ການກຳນົດຄ່າປັບໄໝ ຕໍ່ຜູ້ລະເມີດຄືແນວໃດ ແລະ ບັນຫາອື່ນໆທີ່ຕິດພັນ ໃຫ້ລະອຽດຄັກແນ່ ແລະ ເປັນເອກະພາບກັນ, ພາຍຫຼັງໄດ້ມີການຄົ້ນຄວ້າລະອຽດແລ້ວ ໃຫ້ນຳເຂົ້າພິຈາລະນາໃນກອງປະຊຸມລັດຖະບານ.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານ ເພື່ອຊາບ ແລະ ປະຕິບັດຕາມເນື້ອໃນແຈ້ງການ ສະບັບນີ້ດ້ວຍ. ພພ

ລັດຖະມົນຕີ,

ຫົວໜ້າຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ

ພ. ພພຸດ

ເພັດ ພົມພິພັກ

<u>ບ່ອນນຳສົ່ງ:</u>

| | |
|---|---|
| 1. ນາຍົກ-ຮອງນາຍົກລັດຖະມົນຕີ | 04 ສະບັບ |
| 2. ຫ້ອງວ່າການສູນກາງພັກ | 01 ສະບັບ |
| 3. ນະຄອນຫຼວງວຽງຈັນ | 01 ສະບັບ |
| 4. ກະຊວງພະລັງງານ ແລະ ບໍ່ແຮ່ | 01 ສະບັບ |
| 5. ຄະນະ ຫສນຍ | 06 ສະບັບ |
| 6. ກົມກວດກາ, ຫສນຍ | 01 ສະບັບ |
| 7. ກົມຄົ້ນຄວ້າ-ສັງລວມ, ຫສນຍ | 01 ສະບັບ |
| 8. ສຳເນົາ | 01 ສະບັບ |



Scanned by CamScanner